**ບົດຖະແຫຼງຂ່າວ**

**ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ**

**ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19**

**ປະຈຳວັນ ເສົາ ວັນທີ 11 ກັນຍາ ປີ 2021**

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດຖະແຫຼງຂ່າວ ຂອງຄະນະສະເພາະກິດ **ປະຈຳວັນເສົາ ວັນທີ 11 ກັນຍາ ປີ 2021**.

- ຂ້າພະເຈົ້າ ດຣ. ຣັດຕະນະໄຊ ເພັດສຸວັນ ຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງ ສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ ສປປ ລາວ, ໃນທົ່ວໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

- ❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 11 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **4,440** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **204** ຄົນ ເຊິ່ງ**ຕິດເຊື້ອໃນຊຸມຊົນ 120 ຄົນ** ເປັນຜູ້ສຳພັດໃກ້ຊິດນຳຜູ້ຕິດເຊື້ອເກົ່າ ແລະ ກໍລະນີນຳເຂົ້າ ມີ 84 ຄົນ ເຊິ່ງມີລາຍລະອຽດລຸ່ມນີ້:

ຈາກ ສະຫວັນນະເຂດ 54 ຄົນ, ຈຳປາສັກ 12 ຄົນ, ຄຳມ່ວນ 9 ຄົນ, ນະຄອນຫຼວງວຽງຈັນ 4 ຄົນ, ຫຼວງພະບາງ 3 ຄົນ, , ແລະ ສາລະວັນ 2 ຄົນ. ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກຕ່າງປະເທດ ເຂົ້າຕາມຈຸດຜ່ານແດນສາກົນ.

- ສໍາລັບຜູ້ຕິດເຊື້ອໃນຊຸມຊົນ ຢູ່ນະຄອນຫຼວງວຽງຈັນ ລາຍລະອຽດດັ່ງນີ້:

1. ນະຄອນຫລວງ ວຽງຈັນ: ຊຸມຊົນ 02 ຄົນ ມາຈາກ:

- ບ້ານອ່າງໃຫ່ຍ 1 ຄົນ, ເມືອງສັງທອງ ຊຶ່ງແມ່ນກຸ່ມດຽວກັນກັບກໍລະນີຕິດເຊື້ອ ໃນໄລຍະຜ່ານມາ.

- ບ້ານ ໜອງແຫ້ວ ມີ 1 ຄົນ , ເມືອງຫາດຊາຍຟອງ, ຊຶ່ງມາຈາກຄອບຄົວຂອງຜູ້ຕິດເຊື້ອຜ່ານມາ

2. ສະຫວັນນະເຂດ: ຊຸມຊົນ ມີ 13 ຄົນ ຄື:

- ພະຍາບານ 04 ຄົນ ຊຶ່ງມາຈາກ ເມືອງຊົນບູລີ, ເມືອງເຊໂປນ ແລະ ນະຄອນໄກສອນ

ເມືອງລະ 01 ຄົນ, ເຂົ້າປະຈໍາການຢູ່ໂຮງໝໍພາກສະໜາມຫຼັກ 9

- ຈາກ ບ້ານໂພນສິມ ມີ 02 ຄົນ ຊຶ່ງໄດ້ພົວພັນກັບກຸ່ມ ສະຫວັນ Park
- ຈາກ ບ້ານສີບປ່ອຍ ມີ 01 ຄົນ ກ່ຽວຂ້ອງ ກັບພະນັກງານຫ້ອງການກຸ່ມບ້ານ
- ຈາກ ບ້ານອຸດົມວິໄລ ມີ 01 ຄົນ ເປັນພະນັກງານອາສາສະໝັກພົ່ນຢາຂ້າເຊື້ອ

- 02 ຄົນ ຈາກຄ້າຍຄຸມຂັງ ນະຄອນໄກສອນ  ແລະ ຄ້າຍຫຼັກ 6
- ຈາກ ບ້ານຫົວເມືອງເໜືອ ມີ 01 ຄົນ,
- ບ້ານໂພນສະຫວ່າງເໜືອ ມີ 01 ຄົນ,
- ບ້ານໄຊຍະມຸງຄຸນ ມີ 01 ຄົນ, ກຸ່ມສໍາຜັດໃກ້ສິດ ກັບພະນັກງານຕໍາຫລວດຄ້າຍຄຸມຂັງຫຼັກ 6

3. ຈໍາປາສັກ: 38 ຄົນ ມາຈາກຊຸມຊົນ ທີ່ເປັນຈຸ້ມກໍລະນີທີ່ກ່ຽວຂ້ອງ ກັບ ໂຮງໝໍຊຸມຊົນ ທີ່ພົວພັນກັບການຕິດເຊື້ອໃນໂຮງໝໍເມືອງປະທູພອນ ທີ່ໄດ້ລາຍງານມາແຕ່ທ້າຍອາທິດຜ່ານມາ;

4. ຄໍາມ່ວນ: ມາຈາກຊຸມຊົນ 24 ຄົນ ມາຈາກ 4 ຈຸດຄື:

- ຈຸດເກັບຕົວຢ່າງຈອມທອງ 16 ກໍລະນີ
- ຈຸດເກັບຕົວຢ່າງຢູ່ພະແນກສຸກເສີນໂຮງຫມໍແຂວງ 6 ກໍລະນີ
- ສູນກັກໂຕ 21 ມີນາ 1 ກໍລະນີ (  ລູກຂອງຜູ້ຕິດເຊື້ອມາຢູ່ກັບພໍ່ )
- ສູນປິ່ນປົວໂຮງຫມໍທະຫານ 1 ກໍລະນີ (ລູກຂອງຜູ້ຕິດເຊື້ອມາຢູ່ກັບແມ່)

5. ສາລະວັນ: 1 ຄົນ ມາຈາກຊຸມຊົນ: ເປັນເພດຊາຍ ອາຍຸ 40 ປີ ອາຊີບ ພະນັກງານຕໍາຫລວດ ເຮັດວຽກຢູ່ກອງບັນຊາການ ປກສແຂວງ.

6. ບໍ່ແກ້ວ: 08 ຄົນ; ຈາກເຂດເສດຖະກິດພິເສດ ສາມລຽມຄໍາ

7. ຫລວງພະບາງ: 34 ຄົນ ມາຈາກຊຸມຊົນ ຊຶ່ງມາຈາກ 06 ກຸ່ມຄື:

- ພະຍາບານ ຈາກສຸກສາລາ ນະຄອນຫລວງພະບາງ ມີ 01 ຄົນ, ເຂົ້າປະຈໍາການ ຢູ່ສູນ ຫໍຄອຍສະໜາມບິນ ແລະ ຈາກນັ້ນຍ້າຍມາປະຈໍາການຢູ່ສູນໂຮງຮຽນແພດ.
- 01 ຄົນ ພະນັກງານຕໍາຫລວດ ປະຈໍາການຢູ່ສູນຫ້ວຍມ້າວ ແຕ່ມື້ເປີດສູນຈົນຮອດ ປະຈຸບັນ
- ເມືອງວຽງຄໍາມີ 20 ຄົນ ແມ່ນກໍາມະກອນ ທີ່ມາຈາກແຂວງວຽງຈັນ ເຮັດວຽກຢູ່ສວນ ກ້ວຍ ບ້ານຕັ່ງນ່າຍ, ເມືອງກາສີ ຊຶ່ງ ທັງໝົດໄດ້ກັກໂຕຢູ່ສູນໂຮງຮຽນແພດ
- 04 ຄົນ, ກໍາມະກອນ ເຮັດວຽກຢູ່ສວນຢາງ ບ້ານໜ້ຽງ, ເມືອງວັງວຽງ, ທັງໝົດກັກ ໂຕຢູ່ສູນເມືອງວຽງຄໍາ

- 08 ຄົນ, ກຳມະກອນ ໂຮງງເລື່ອຍ, ເມືອງປາກລາຍ, ແຂວງໄຊຍະບູລີ ແລະ ທັງໝົດ ໄດ້ພັກໂຕຢູ່ສູນເມືອງນານ
- 02 ຄົນ, ອາຊີບແມ່ບ້ານ ກັບມາແຂວງ ແລ້ວຖືກພັກໂຕຢູ່ສູນ ເມືອງວຽງຄຳ ແລະ ຜູ້ນຶ່ງພັກໂຕຢູ່ສູນໂຮງຮຽນແພດ
- 02 ຄົນ, ອາຊີບເປັນແມ່ເຮືອນ ແລະ ກຳມະກອນກໍ່ສ້າງ ທີ່ໄດ້ໄປເຮັດວຽກຢູ່ເມືອງບຸນເ ໜືອ, ແຂວງຜົ້ງສາລີ ແລະ ທັງໝົດ ກັບມາແຂວງ ແລະ ຖືກພັກໂຕຢູ່ສູນໂຮງຮຽນ ແພດ.

➢ ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວ

➢ ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **17,140 ຄົນ**, ເສຍຊີວິດ

ສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **4,365** ຄົນ.

➢ **ສຳລັບ ບ້ານ ທີ່ຖືກກຳນົດເປັນບ້ານແດງໃໝ່ໃນນະຄອນຫຼວງວຽງຈັນ ແມ່ນບໍ່ມີ**

- ສໍາລັບຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19 ຢູ່ ນະຄອນຫຼວງວຽງຈັນ **ຈຸດເກັບຕົວຢ່າງ ຢູ່ສູນກິລາໃນຮົ່ມບຶງຂະຫຍອງ** ເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີການລາຍງານຄົນຕິດເຊື້ອ.
- ສໍາລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກໍານົດໄວ້.

### ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 10 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈໍານວນ ທັງໝົດ **2,367** ຄົນ.

- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **93** ສູນ ແລະ **54** ໂຮງແຮມ , ມີຜູ້ຈຳກັດບໍລິເວນ **7,832** ຄົນ.

➢ **ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ 224,598,994 (580,576 ໃໝ່), ເສຍຊີວິດທັງໝົດ 4,629,542 (8,763 ໃໝ່), ປິ່ນປົວຫາຍດີ 201,119,158 (517,011 ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ ສະຫະລັດອາເມລິກາ**,** ອິນເດຍ ແລະ ບຣາຊິວ.

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

- ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກ່ວາໝູ່ແມ່ນ ປະເທດໄທ ເຊິ່ງມີຜູ້ຕິດເຊື້ອໃໝ່ **14,403** ຄົນ ແລະ ເສຍຊີວິດໃນມື້ດຽວ **189** ຄົນ ຮອງລົງມາແມ່ນ ສສ ຫວຽດນາມ ມີລາຍງານຜູ້ຕິດເຊື້ອໃໝ່ **13,321** ຄົນ ແລະ ເສຍຊີວິດໃນມື້ດຽວ **275** ຄົນ.

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**

- ສະພາບການ ໃນທົ່ວໂລກ ລວມທັງ ສປປ ລາວ ການລະບາດຂອງພະຍາດໂຄວິດ-19 ແມ່ນໜ້າເປັນຫ່ວງທີ່ສຸດ. ຫຼາຍແຂວງ ຂອງ ສປປ ລາວ ແມ່ນມີການລະບາດໃນຊຸມຊົນແບບຫຼາຍຈຸ້ມ, ຫຼາຍສາຂາອາຊີບ ແລະ ບາງກໍລະນີ ຍັງບໍ່ທັນຮູ້ໄດ້ເຖິງແຫຼ່ງການຕິດເຊື້ອ ເຊິ່ງມີແຂວງຈຳນວນນຶ່ງແມ່ນຈັດລະດັບການລະບາດຢູ່ໃນຂັ້ນ 2 ແລະ ມີບາງແຂວງຈະ

ກ້າວເຂົ້າສູ່ຂັ້ນ 3 ຖ້າບໍ່ມີມາດຕະການຢ່າງເຂັ້ມງວດເຂົ້າມາຮອງຮັບ ແລະ ປະຊາຊົນຍັງບໍ່ໃຫ້ຄວາມຮ່ວມມືໃນການປະຕິບັດຕາມແຈ້ງການທີ່ວາງອອກ.

- ການປ້ອງກັນຕົນເອງ, ປ້ອງກັນຄອບຄົວ ແລະ ປ້ອງກັນຄົນທີ່ທ່ານຮັກ ໂດຍການ ປະຕິບັດຕາມມາດຕະການທີ່ທາງ ຄະນະສະເພາະກິດເພິ່ນໄດ້ວາງອອກ ເຊິ່ງມີຂໍ້ປະຕິບັດດັ່ງນີ້:
    - ບໍ່ຊຸມແຊວທຸກຮູບແບບ
    - ຮັກສາໄລຍະຫ່າງ ແລະ ບໍ່ຢູ່ໃກ້ຄົນທີ່ມີອາການບໍ່ສະບາຍ
    - ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວທີ່ມີທາດເຫຼົ້າ
    - ໃສ່ຜ້າອັດປາກ-ດັງ ຢ່າງຖືກວິທີ
    - ບໍ່ໃຊ້ສິ່ງຂອງສ່ວນຕົວຮ່ວມກັບຄົນອື່ນ

- ບໍ່ເດີນທາງໄປເຂດສ່ຽງ ຫຼື ສະຖານທີ່ສ່ຽງ ໂດຍສະເພາະບ້ານແດງ, ສະຖານທີ່ແອອັດ, ສະຖານທີ່ ອາກາດບໍ່ຖ່າຍເທ.
- ໝັ່ນເຮັດອະນາໄມ ແລະ ຂ້າເຊື້ອຈຸດສ່ຽງຕ່າງໆ ເຊັ່ນ: ບ່ອນຈັບປະຕູ, ຮາວຂັ້ນໄດ, ລີໂໝດແອ-ລີໂໝດໂທລະພາບ, ບ່ອນກົດລິບ. ອື່ນໆ
- ໃສ່ ແລະ ຖອດ ອຸປະກອນປ້ອງກັນໂຕເອງ ແລະ ຖິ້ມໃຫ້ຖືກວິທີ

- ອີກເທື່ອໜຶ່ງ, ຂ້າພະເຈົ້າຂໍຮຽກຮ້ອງມາຍັງ ພໍ່ແມ່, ພີ່ນ້ອງ, ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງພ້ອມໃຈກັນ ປະຕິບັດການດຳລົງຊີວິດປົກກະຕິແບບໃໝ່ (new normal) ຢ່າງເປັນປະຈຳໃຫ້ກາຍເປັນຄວາມເຄີຍຊິນ. ພວກເຮົາທຸກຄົນ ຕ້ອງຮ່ວມແຮງຮ່ວມໃຈກັນເປັນຈິດໜຶ່ງໃຈດຽວ ພ້ອມກັນຜ່ານຜ່າວິກິດນີ້ໄປດ້ວຍກັນ ແລະ ສາມາດກັບມາດຳລົງຊີວິດປົກກະຕິໄດ້ໂດຍໄວ.

ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳວັນເສົາ ວັນທີ 11 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້. ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານທີ່ຕິດຕາມຊົມ ແລະ ຮັບຟັງ (ຂອບໃຈ)